ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມ ຄຄຊ ຄັ້ງທີ III ປະຈໍາປີ 2025





ໃນຕອນເຊົ້າຂອງວັນທີ 16 ທັນວາ 2025 ທີ່ຫ້ອງປະຊຸມ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ໄດ້ຈັດກອງປະຊຸມຄົບ ຄະນະກໍາມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ III ປະຈໍາປີ 2025 ຂຶ້ນ, ກອງປະຊຸມຄັ້ງນີ້ໃຫ້ກຽດເປັນປະທານໂດຍ ທ່ານ ສະເຫຼີມໄຊ ກົມມະສິດ, ຮອງນາຍົກລັດຖະມົນຕີ, ປະທານ ຄຄຊ ພ້ອມດ້ວຍບັນດາຄະນະ ຄຄຊ, ຄະນະກົມ ຕາງໜ້າຈາກກະຊວງກ່ຽວຂ້ອງ, ຄະນະ ສຄຄຊ, ປະທານສະພາບໍລິຫານ ແລະ ຜູ້ອໍານວຍການໃຫຍ່ ຕະຫຼາດຫຼັກຊັບລາວ (ຕລຊລ) ພ້ອມທັງບັນດາພະນັກງານທີ່ກ່ຽວຂ້ອງຈາກ ສຄຄຊ ເຂົ້າຮ່ວມ.

ຈຸດປະສົງໃນການຈັດກອງປະຊຸມຄົບຄະນະ ຄຄຊ ໃນຄັ້ງນີ້ ແມ່ນເພື່ອລາຍງານຜົນການຈັດຕັ້ງປະຕິບັດຕາມມະຕິຂອງກອງປະຊຸມຄັ້ງຜ່ານມາ ພ້ອມທັງ ລາຍງານຜົນການເຄື່ອນໄຫວວຽກງານ ປີ 2025 ແລະ ທິດທາງແຜນການ ປີ 2026 ຂອງ ສຄຄຊ ແລະ ບັນຫາອື່ນໆ ໂດຍ ທ່ານ ນາງ ແພງສີ ແພງເມືອງ, ຫົວໜ້າ ສຄຄຊ. ນອກຈາກນີ້, ກອງປະຊຸມຍັງໄດ້ຮັບຟັງການລາຍງານຂອງ ທ່ານ ສຽວສະຫວາດ ທິລະກຸນ ຜູ້ອໍານວຍການໃຫຍ່ ຕລຊລ ກ່ຽວກັບ ສະພາບການພົ້ນເດັ່ນໃນການເຄື່ອນໄຫວວຽກງານຂອງ ຕລຊລ ປະຈໍາປີ 2025 ແລະ ທິດທາງແຜນການ ປີ 2026.

ຫຼັງຈາກທີ່ໄດ້ຮັບຟັງການລາຍງານຂອງ ທ່ານ ຫົວໜ້າ ສຄຄຊ ແລະ ທ່ານ ຜູ້ອໍານວຍການໃຫຍ່ ຕລຊລ ແລະ ການປະກອບຄໍາເຫັນຂອງ ຄະນະ ຄຄຊ ຢ່າງກົງໄປກົງມາ, ທ່ານ ປະທານກອງປະຊຸມ ໄດ້ຕີລາຄາສູງຕໍ່ການພະຍາຍາມຈັດຕັ້ງປະຕິບັດມະຕິກອງປະຊຸມ ຄຄຊ ຄັ້ງທີ II ປີ 2025 ແລະ ການເຄື່ອນໄຫວວຽກງານຫຼັກຊັບ ໃນ ປີ 2025 ຊຶ່ງເຫັນໄດ້ຜົນສໍາເລັດຕາມແຜນກໍານົດໄວ້ ແລະ ເພື່ອເປັນບ່ອນອີງໃນການສືບຕໍ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບ ຢູ່ ສປປ ລາວ, ທີ່ປະຊຸມໄດ້ເຫັນດີເປັນເອກະພາບ ຕໍ່ແຜນການເຄື່ອນໄຫວວຽກງານ ປີ 2026

ຕາມການລາຍງານຂອງ ສຄຄຊ ແລະ ຕລຊລ. ພ້ອມນີ້, ທີ່ປະຊຸມກໍ່ມອບໃຫ້ ສຄຄຊ ແລະ ຕລຊລ ສຸມໃສ່ວຽກງານ ເປັນຕົ້ນແມ່ນ: ຊຸກຍູ້ການອອກຈໍາໜ່າຍຮຸ້ນກູ້ສີຂຽວ ໃນ ຕລຊລ, ຄົ້ນຄວ້າສ້າງເງື່ອນໄຂ ເພື່ອຊຸກຍູ້ລັດວິສາຫະກິດ ປະຕິຮູບຜ່ານກົນໄກຕະຫຼາດທຶນ, ຊຸກຍູ້ການຈັດຕັ້ງປະຕິບັດມາດຕະຖານ IFRS ຂອງບໍລິສັດຈົດທະບຽນ, ສຶກສາຄົ້ນຄວ້າຄວາມເປັນໄປໄດ້ໃນການສ້າງຕະຫຼາດອະນຸພັນ ຢູ່ ສປປ ລາວ ແລະ ບັນຫາອື່ນໆ. ກອງປະຊຸມໄດ້ຈົບລົງໃນວັນດຽວກັນ ຢ່າງຈົບງາມ ແລະ ສໍາເລັດຕາມຄາດໝາຍທີ່ກໍານົດໄວ້.



ຂ່າວ: ສຄຄຊ

ພາບ: ຫ້ອງການ ທຫລ

ຢູ່ເມືອງລາວໃຊ້ເງິນກີບລາວ